

World Vision

World Vison Laos Annual Report 2012

## Child Protection

World Vision's mission is to improve the lives of children and keeping children safe lies at the heart of this. Children in Lao PDR are at risk of being trafficked to neighbouring countries to work in inhumane conditions. . The following summarises our main activities in this area in 2012:

Developed and delivered a series of training courses on child rights, child protection, sex abuse and child suicide. This education series was provided to teachers, community members, private tourism operators and government counterparts. The main focus was on making participants aware of the many threats facing children in Lao PDR and giving them tools to keep children safe.

Established a number of children's groups that focused on educating children about their rights and on protection issues in an environment where they felt safe. The groups mixed play with serious topics to ensure children were aware of the threats to them in their local area and how they could avoid them. The groups also encouraged children to have a voice and to participate in decisions that affect their lives.

CHANGE4Children

Assisted 76 victims of trafficking to return to villages in three provinces (Champasak, Salavan and Savannkhet). World Vision liaised with local authorities to arrange the safe return of these victims to their village. Once there, World Vision provided counselling and skills training to support their reintegration so they can build a sustainable future in their local area. These reintegration services were provided to an additional 10 trafficking victims in the Savannkhet region.

Built close relationships with at-risk communities to raise awareness of the issue of human trafficking. A key part of this work was to ask communities to identify child protection issues and World Vision has included ways to address these issues in our work plans. In addition, World Vision organised a National Youth Forum to bring together young people and policy makers to discuss child protection. This enabled young people to raise their own concerns and recommendations regarding issues that affect them and their communities.

ການປົກປ້ອງເດັກ

ອົງການ ສຸພະນິມິດ ມີພາລະກິດຫລັກໃນການສົ່ງເສີມການດໍາລົງຊີວິດຂອງເດັກນ້ອຍ ແລະ ປົກປ້ອງຊີວິດເຂົາເຈົ້າໃຫ້ປອດໄພ. ເດັກນ້ອຍທຸກຍາກຢູ່ໃນ ສ ປ ປ ລາວ ແມ່ນມີຄວາມສ່ຽງຕໍ່ການຕົກເປັນເຫື່ຍອຂອງການຄ້າມະນຸດໃຫ້ກັບປະເທດເພື່ອນບ້ານໂດຍການເຮັດວຽກງານພາຍໃຕ້ເງື່ອນໄຂທີ່ຂາດມະນຸດສະທໍາ. ຂ້າງລຸ່ມນີ້ແມ່ນການສັງລວມບັນດາກິດຈະກໍາຫຼັກຂອງວຽກງານປົກປ້ອງເດັກໃນປີ 2012

ພັດທະນາຄູ່ມືການຝຶກອົບຮົມ ແລະ ການສະໜອງການບໍລິການໃນຫົວຂໍ້ສິດທິຂອງເດັກ, ການປົກປ້ອງເດັກ, ການທາລຸນທາງເພດ ແລະ ການຄິດຂ້າຕົວຕາຍຂອງເດັກ. ການພັດທະນາ ແລະ ຄູ່ມືດັ່ງກ່າວໄດ້ມອບໃຫ້ບັນດາຄູອາຈານ, ຊຸມຊົນ, ການບໍລິການນໍາທ່ຽວເອກະຊົນ ແລະ ຄູ່ຮ່ວມງານພາກລັດຖະບານ. ເປົ້າໝາຍຫຼັກແມ່ນເພື່ອເນັ້ນໃສ່ເຮັດໃຫ້ຜູ້ເຂົ້າຮ່ວມຮູ້ເຖິງບັນຫາໄພຄຸກຄາມຕໍ່ກັບເດັກນ້ອຍໃນລາວ ແລະ ໃຫ້ຄໍາແນະນໍາວິທີປົກປ້ອງລູກຂອງເຂົາເຈົ້າໃຫ້ມີຄວາມປອດໄພ.

ການສ້າງຕັ້ງບັນດາກຸ່ມສະໂມສອນເດັກນ້ອຍທີ່ແນໃສ່ໃຫ້ການສຶກສາແກ່ເດັກນ້ອຍກ່ຽວກັບສິດທິຂອງເຂົາເຈົ້າ ແລະ ບັນຫາການປົກປ້ອງໃນສະພາບແວດລ້ອມທີ່ເຂົາເຈົ້າຮູ້ສຶກປອດໄພ ແລະ ມີຄວາມສຸກ. ການປະສົມປະສານການຫຼິ້ນກັບຫົວຂໍ້ທີ່ສົມບູນແບບເພື່ອຮັບປະກັນວ່າເດັກນ້ອຍຮູ້ເຖິງໄພຄຸກຄາມທີ່ມີຕໍ່ເຂົາເຈົ້າໃນທ້ອງຖິ່ນຕົນເອງ ແລະ ພວກເຂົາສາມາດຫຼີກລ້ຽງບັນຫາໄດ້ແນວໃດ. ສະໂມສອນເດັກແມ່ນສົ່ງເສີມໃຫ້ເຂົາກ້າສະແດງຄວາມຄິດເຫັນ ແລະ ເຂົ້າຮ່ວມໃນການຕັດສິນໃຈທີ່ເຫັນວ່າມີຜົນປະໂຫຍດຕໍ່ຕົວເຂົາ.

ຊ່ວຍເຫຼືອຜູ້ຕົກເປັນເຫຍື່ອຂອງການຄ້າມະນຸດ 76 ຄົນ, ລວມມີເດັກນ້ອຍ 32 ຄົນ, ຖືກສົ່ງກັບຄືນສູ່ບ້ານຂອງເຂົາເຈົ້າໃນສາມແຂວງ (ຈໍາປາສັກ, ສາລາວັນ, ແລະ ສະຫວັນນະເຂດ). ອົງການ ສຸພະນິມິດ ສົມທົບກັບອໍານາດການປົກຄອງທ້ອງຖິ່ນຈັດຕຽມສົ່ງຜູ້ຖືກເຄາະຮ້າຍກັບຄືນຖິ່ນຖານຂອງຕົນຢ່າງປອດໄພ. ເມື່ອກັບຄືນຮອດບ້ານແລ້ວ, ອົງການ ສຸພະນິມິດ ຍັງໃຫ້ຄໍາປຶກສາ ແລະ ຝຶກອົບຮົມທັກສະເພື່ອຊ່ວຍປັບຕົວເຂົ້າກັບສັງຄົມ ແລະ ສົ່ງເສີມຄວາມສາມາດເພື່ອສ້າງການດໍາລົງຊີວິດທີ່ຍືນຍົງໃນທ້ອງຖິ່ນຂອງເຂົາເຈົ້າ. ການບໍລິການຄຸ້ມຄອງຜູ້ຖືກເຄາະຮ້າຍມີຈໍານວນ 10 ຄົນຢູ່ໃນແຂວງ ສະຫວັນນະເຂດ.

ສາຍພົວພັນໃກ້ຊິດກັບບັນດາຊຸມຊົນທີ່ມີຄວາມສ່ຽງແມ່ນສາມາດສອນໃຫ້ພວກເຂົາມີສະຕິລະວັງຕົວຕໍ່ບັນຫາການຄ້າມະນຸດ. ບັນຫາຫຼັກໆຂອງວຽກງານແມ່ນເພື່ອໃຫ້ຊຸມຊົນຮູ້ເຖິງບັນຫາການປົກປອງເດັກ. ອົງການ ສຸພະນິມິດ ໄດ້ນໍາເອົາຫລາຍແນວທາງແກ້ໄຂບັນຫາເຂົ້າໃນແຜນວຽກຂອງພວກເຮົາ. ນອກຈາກນີ້, ອົງການ ສຸພະນິມິດຍັງຈັດຕັ້ງເວທີພົບປະລະດັບຊາດຂອງໄວໜຸ່ມ ໂດຍນໍາເອົາໄວໜຸ່ມ ແລະ ຜູ້ວາງນະໂຍບາຍມາສົນທະນາກ່ຽວກັບການປົກປ້ອງເດັກ. ການເປີດໂອກາດນີ້ເຮັດໃຫ້ໄວໜຸ່ມສາມາດສະແດງຄວາມຄິດເຫັນ ແລະ ພ້ອມກັບຂໍ້ແນະນໍາກ່ຽວກັບການແກ້ໄຂບັນຫາທີ່ມີຜົນກະທົບຕໍ່ຕົນເອງ ແລະ ຊຸມຊົນຂອງພວກເຂົາເຈົ້າ.

CHANGE 4 Children

contact us

World Vision Lao PDR
333 Nong Bone Road
P.O. Box 312
Vientiane, Lao PDR 1005

Tel: 856 21 414 169, 452, 100
Fax: 856 21 451 101
Email: Laos@wvi.org
Web: www.wvi.org/laos

World Vision